*Souphanouvong University Journal of Multidisciplinary Research and Development*
2024, Vol.10. No. 4, 65-73
https://doi.org/10.69692/SUJMRD100465

# Factors Affecting Students' Decisions in Choosing to Study for a Master's Degree of Souphanouvong University

**Keo Chanthamanyvong[1], Thipphavan Duangvilaykeo[2], Saithala Saibounbhang[3]**

*Department of Business Administration, Faculty of Economics and Tourism, Souphanouvong University, Lao PDR*

***Correspondence:** Keo Chanthamanivong, Souphanouvong University, Lao Tel: +85620 55171744, E-mail: Keo@su.edu.la*

***Submitted: July 02, 2024***

***Revised: July 15, 2024***

***Accepted: August 21, 2024***

## Abstract

The purpose of this study was to investigate: 1) the level of students' opinions on the importance of factors that encourage students to study for the Master's program of Souphanouvong University, and 2) factors affecting students' decisions in choosing to study for the Master's program of Souphanouvong University. This study was conducted a quantitative and qualitative study, the sample group are 220 students who have graduated and are studying at the master's level of Souphanouvong University, using the questionnaires as a tool in the study, the statistics analysis were mean, Standard Deviation, and Regression multiple analysis.

The result of the study found that

1) the level of students' opinions on the importance of factors that encourage students to study for the Master's degree of Souphanouvong University as a whole gives a high level of importance with $\overline{X}$ =4.15 and S.D=0.46, which includes the course advertising factor at many levels with $\overline{X}$ = 4.15 and S.D=0.46, motivational factors with $\overline{X}$ =4.14 and S.D=46, and maintenance factor with $\overline{X}$ =4.07 and S.D= 0.54.

2) Factors affecting students' decisions in choosing to study for the Master's degree of Souphanouvong University include personnel development factors, teachers (professors), environmental factors and learning resources, scientific research factors and academic services with a statistical significance level of 0.05.

**Keywords:** *Factors affecting, Decision, Master degree, Master students.*

## 1. ພາກສະເໜີ

ການສຶກສາ ເປັນຫົວໃຈສຳຄັນຂອງການພັດທະນາຊັບພະຍາກອນມະນຸດ ເຊິ່ງເປັນຊັບພະຍາກອນທີ່ສຳຄັນຂອງສັງຄົມໃຫ້ມີຄຸນນະພາບ, ສາມາດດຳລົງຊີວິດຢູ່ໃນສັງຄົມໄດ້ຢ່າງເປັນສຸກ, ທັນຕໍ່ການປ່ຽນແປງທີ່ເກີດຂຶ້ນຕາມຍຸກສະໄໝໂດຍສະເພາະໃນຍຸກປັດຈຸບັນມີການປ່ຽນແປງຢ່າງໄວວາ, ຄາດການລ່ວງໜ້າບໍ່ໄດ້ ເຊິ່ງຕ້ອງປັບປ່ຽນໃຫ້ທັນ ແລະ ສອດຄ່ອງກະແສການປ່ຽນແປງຂອງຊາດ ແລະ ສັງຄົມ ຢູ່ຕະຫຼອດເວລາ ໂດຍສະເພາະ ສະຖາບັນການສຶກສາ ລະດັບມະຫາວິທະຍາໄລ ທີ່ມີຈຸດມຸ່ງໝາຍ ເພື່ອພັດທະນາບຸກຄົນໃນມີຄວາມສົມບູນ ມີຄວາມພ້ອມໃນທຸກດ້ານ ບໍ່ວ່າຈະເຫັນຄວາມພ້ອມ ທາງດ້ານຄຸນລັກສະນະ, ບຸກຄະລິກກະພາບ, ຄຸນນະທຳ, ຈະລິຍະທຳ ແລະ ຄວາມສາມາດດ້ານວິຊາຊີບ ທີ່ຈະນຳໄປເປັນເຄື່ອງມືປະກອບ

ອາຊີບໃນອານາຄົດ ອັນຈະສາມາດດາລົງຊີວິດຢູ່ໃນສັງຄົມ ໄດ້ ລວມທັງເຮັດວຽກຮ່ວມກັບຄົນອື່ນໄດ້ຢ່າງມີ ປະສິດທິພາບ, ໃຫ້ມີຄ່ານິຍົມ ແລະ ການປະພຶດຕາມ ບັນທັດຖານຂອງສັງຄົມ (ກະຊວງສຶກສາທິການ ແລະ ກິລາ , 2016). ການພັດທະນາຄົນໃນດ້ານຄຸນນະພາບ ຕ້ອງຄຳ ນຶງເຖິງ ການພັດທະນາທາງດ້ານຮ່າງກາຍ ແລະ ຈິດໃຈ ຄວບຄູ່ກັນໄປ ໂດຍສະເພາະ ຜູ້ທີ່ກຳລັງສຶກສາຮ່ຳຮຽນໃນ ລະດັບມະຫາວິທະຍາໄລ ເຊິ່ງໃນລະບົບການຈັດການຮຽນ-ການສອນໃນລະດັບມະຫາວິທະຍາໄລ ມີຄວາມກ່ຽວຂ້ອງ ຕັ້ງແຕ່ຂະບວນການຮັບບຸກຄົນທີ່ມີຄຸນສົມບັດເໝາະກັບ ສາຂາວິຊາ, ຂະບວນການພັດທະນາໃຫ້ນັກສຶກສາ ມີຄຸນ ລັກສະນະ ແລະ ຄວາມສາມາດເປັນໄປຕາມປັດຊະຍາຂອງ ສະຖາບັນ, ຂະບວນການພັດທະນານັກສຶກສາ ໃຫ້ມີຄຸນ ນະພາບເປັນໄປຕາມເປົ້າໝາຍຂອງສະຖາບັນ ນັ້ນຈຳເປັນ ຕ້ອງມີລະບົບ ຫຼື ປັດໃຈສະໜັບສະໜູນ ທີ່ຈະຊ່ວຍໃຫ້ ນັກສຶກສາໄດ້ຮັບການພັດທະນາໄປສູ່ຈຸດມຸ່ງໝາຍ ຕາມສະ ຖາບັນຕ້ອງການໄດ້ຢ່າງມີປະສິດທິພາບ, ລະບົບ ຫຼື ປັດໃຈ ສະໜັບສະໜູນດັ່ງກ່າວ ປະກອບດ້ວຍ: ລະບົບຫຼັກສູດ, ລະບົບການຮຽນ-ການສອນ, ລະບົບກິດຈະກຳ ນັກສຶກສາ, ລະບົບການປະເມີນນອກຈາກນັ້ນ ການສຶກສາ ຍັງມີ ບົດບາດສຳຄັນ ຕໍ່ການພັດທະນາຄຸນນະພາບຊີວິດການເປັນ ຢູ່, ການພັດທະນາເສດຖະກິດ-ສັງຄົມ ແລະ ການເມືອງ. ການສຶກສາຈະຊ່ວຍສ້າງຄົນໃຫ້ເປັນພົນລະເມືອງທີ່ດີ ມີ ວິໄນ ມີຄຸນນະທຳ ແລະ ຍັງຈະຊ່ວຍໃນການສ້າງກຳລັງຄົນ ໃຫ້ມີຄວາມຮູ້ຄວາມສາມາດ ເໝາະສົມກັບວຽກງານໃນ ສາຂາຕ່າງໆ ປະເທດຊາດຈະຈະເລີນກ້າວໜ້າ ກໍ່ລ້ວນ ແລ້ວແຕ່ຂຶ້ນຢູ່ກັບຄຸນນະພາບ ຂອງຊັບພະຍາກອນມະນຸດ ເຊິ່ງເປັນຜົນຜະລິດຈາກສະຖາບັນການສຶກສາ (ກົມການສຶກ ສາຊັ້ນສູງ, 2020).

ການສຶກສາຖືເປັນປັດໄຈພື້ນຖານສຳລັບປະຊາຊົນ ວ່າລັດຖະບານ ຕ້ອງມີການສົ່ງເສີມ ໂດຍສະເພາະດ້ານການ ສຶກສາຂັ້ນພື້ນຖານເພື່ອເປັນສ່ວນປະກອບພື້ນຖານທີ່ສຳຄັນ ທີ່ສຸດໃນການພັດທະນາປະເທດທີ່ຈະເລີນກ້າວໜ້າ ແລະ ມີ ຄວາມໝັ້ນຄົງ ໃນປັດຈຸບັນ, ການສຶກສາຂັ້ນພື້ນຖານອາດ ຈະບໍ່ພຽງພໍໃນການເຮັດວຽກ ຫຼືສ້າງໂອກາດເພື່ອຄວາມ ກ້າວໜ້າ ການປະກອບອາຊີບເພື່ອລ້ຽງດູຕົນເອງ ແລະ ຄອບຄົວໄດ້ໃນອະນາຄົດ (Anonjarn, 2020). ລັດຖະບານໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສາຄັນຫຼາຍຕໍ່ກັບ ການພັດທະນາການສຶກສາ ໂດຍຖືເອົາເປັນວຽກງານຈຸດ ໃຈກາງຂອງການພັດທະນາຊັບພະຍາກອນມະນຸດ, ໄດ້ ບັນຈຸວຽກງານດັ່ງກ່າວໄວ້ໃນວິໄສທັດຮອດປີ 2030, ຍຸດ ທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການ ສຶກສາ ແລະ ກິລາວ 5 ປີ ຄັ້ງທີ 8 (2016-2020) ໄດ້ ເຕົ້າໂຮມເອົາວຽກງານສຶກສາ ແລະ ກິລາເຊື່ອມເຂົ້າກັນເພື່ອ ເຮັດໃຫ້ວຽກງານການສຶກສາເປັນໄປຕາມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ, ພ້ອມສຸມໃສ່ດາເນີນການປະຕິ ຮູບລະບົບການສຶກສາແຫ່ງຊາດ ແລະ ປັບປຸງວຽກງານ ກິລາ-ກາຍຍະກຳຢ່າງແຂງແຮງ, ກວ້າງຂວາງ, ເລິກເຊິ່ງ ດ້ວຍຈິດໃຈບຸກທະລຸກ ເຮັດໃຫ້ດ້ານປະລິມານ ແລະ ຄຸນ ນະພາບຂອງການສຶກສາເລີ່ມມີຄວາມກົມກຽວສອດຄ່ອງ ກັນ ແລະ ມີຜົນສຳເລັດສູງຂຶ້ນກວ່າເກົ່າ, ຄ່ອຍໆເຊື່ອໂຍງ ເຂົ້າກັບມາດຕະຖານການສຶກສາ ແລະ ກິລາຂອງສາກົນເປັນ ກ້າວໆ (Vatthanavong et al., 2020) . ການສຶກສາໃນ ລະດັບປະລິນຍາໂທ ໄດ້ຮັບຄວາມສຳຄັນເພີ່ມຂຶ້ນຢ່າງ ຫຼວງຫຼາຍບໍ່ວ່າຈະເປັນສະຖາບັນການສຶກສາຂອງລັດຫຼື ເອກະຊົນ, ຖືເປັນໂອກາດສຳລັບການສຶກສາສຳລັບຜູ້ທີ່ ສົນໃຈຢາກສຶກສາຕໍ່ສາມາດເລືອກສຶກສາຕໍ່ໄດ້ຕາມຄວາມ ຕ້ອງການ. ສາມາດສຶກສາຄວບຄູ່ໄປກັບການເຮັດວຽກໃນ ສັງຄົມປັດຈຸບັນ. ນັກຮຽນເປັນຈານວນຫຼວງຫຼາຍເລືອກສຶກ ສາຕໍ່ລະດັບປະລິນຍາໂທ ເພາະຕ້ອງການພັດທະນາສັກຍະ ພາບຂອງຕົນເອງໃຫ້ມີຄວາມຮູ້ ຄວາມຊຳນານ ແລະປະສົບ ການໃຫມ່ໃຫ້ຫຼາຍຂຶ້ນ ເພື່ອທີ່ຈະສາມາດປະຕິບັດວຽກໄດ້ ຢ່າງມີປະສິດທິພາບ ແລະ ທັນຕໍ່ການປ່ຽນແປງທາງດ້ານ ສັງຄົມ, ຄວາມກ້າວໜ້າທາງວິຊາການ ຕະຫຼອດກັບຄວາມ ຈະເລີນທາງວິທະຍາສາດແລະເຕັກໂນໂລຍີທີ່ມີການ ປ່ຽນແປງຢ່າງໄວວາ, ສະນັ້ນ ມັນຈຳເປັນຕ້ອງພັດທະນາຕົນ

ເອງເພື່ອໃຫ້ທັນກັບໂລກທີ່ມີການປ່ຽນແປງຕະຫຼອດໄປ. ນອກຈາກນັ້ນ, ຜູ້ທີ່ຈົບການສຶກສາລະດັບປະລິນຍາໂທ ຍັງເປັນທີ່ຍອມຮັບຈາກສັງຄົມ ສິ່ງຜົນໃຫ້ຄວາມກ້າວໜ້າໃນໜ້າທີ່ການງານ. ການສຶກສາລະດັບສຶກສາປະລິນຍາໂທນັ້ນມີຜູ້ນິຍົມເຂົ້າສຶກສາຕໍ່ກັນຫຼາຍຂຶ້ນເນື່ອງຈາກລະບົບການສຶກສາໃນລະດັບຕົ້ນໆ ຂອງປະເທດໄດ້ຂະຫຍາຍຕົວຫຼາຍຂຶ້ນ ແລະ ປັດໃຈສຳຄັນທີ່ມີອິດທິພົນທີ່ສຳຄັນຕໍ່ການສຶກສາອີກຢ່າງໜຶ່ງຄືຄ່ານິຍົມໃນລະດັບປະລິນຍາບັດຫຼືການໄດ້ຮັບປະລິນຍາທີ່ສູງນັ້ນຈະທຳໃຫ້ມີຜົນປະໂຫຍດ ແລະ ໂອກາດເພື່ອເຮັດວຽກງານໃຫ້ດີຂຶ້ນ (Keosomboon, 2002). ດັ່ງນັ້ນ, ຈຶ່ງມີນັກຮຽນເປັນຈຳນວນຫຼວງຫຼາຍເລືອກສຶກສາຕໍ່ເພາະຕ້ອງການພັດທະນາສັກຍະພາບຂອງຕົນເອງໃຫ້ມີຄວາມຮູ້ ຄວາມຊຳນານ ແລະປະສົບການໃຫມ່ໃຫ້ຫຼາຍຂຶ້ນເພື່ອທີ່ຈະສາມາດປະຕິບັດວຽກໄດ້ຢ່າງມີປະສິດທິພາບ ແລະ ທັນຕໍ່ການປ່ຽນແປງທາງດ້ານສັງຄົມ, ຄວາມກ້າວໜ້າທາງວິຊາການ ຕະຫຼອດກັບຄວາມຈະເລີນທາງວິທະຍາສາດ ແລະເຕັກໂນໂລຍີທີ່ມີການປ່ຽນແປງຢ່າງໄວວາ.

ມະຫາວິທະຍາໄລ ສຸພານຸວົງ (Souphanouvong University) ຂຽນຫຍໍ້ (ມສ) (SU) ໄດ້ຮັບການສ້າງຕັ້ງຂຶ້ນຕາມດຳລັດນາຍົກລັດຖະມົນຕີ ສະບັບເລກທີ 169/ນຍ, ລົງວັນທີ 4 ພະຈິກ 2003 ແລະ ໄຂສົກ ຮຽນຄັ້ງປະຖົມມະລຶກ ໃນວັນທີ 05 ພະຈິກ 2003 ມະຫາວິທະຍາໄລ ສຸພານຸວົງ ແມ່ນ 1 ໃນ 5 ມະຫາວິທະຍາໄລຂອງລັດ, ເປັນສູນກາງການສຶກສາໃນຂົງເຂດພາກເໜືອຂອງລາວ (ນາຍົກລັດຖະມົນຕີ, 2003). ສົກສຶກສາ 2022-2023 ມະຫາວິທະຍາໄລ ສຸພານຸວົງ ມີຫຼັກສູດປະລິນຍາຕີປົກກະຕິ 41 ຫຼັກສູດສາຂາວິຊາ, ຫລັກສູດຕໍ່ເນື່ອງ 10 ຫຼັກສູດ ແລະ ຫລັກສູດປະລິນຍາໂທ 7 ຫຼັກສູດ ຄື: ຫຼັກສູດບໍລິຫານທຸລະກິດ, ຫຼັກສູດເສດຖະສາດ, ຫຼັກສູດວິທະຍາສາດການລ້ຽງສັດ, ຫຼັກສູດກະສິກຳ ແລະ ສິ່ງແວດລ້ອມ, ຫຼັກສູດບໍລິຫານຊັບພະຍາກອນອີງກອນ, ຫຼັກສູດການສຶກສາ ແລະ ການພັດທະນາ, ແລະ ຫຼັກສູດວິສະວະກຳຄອມພິວເຕີ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ. ໃນສົກສຶກສາ 2022-2023 ການສະໝັກເຂົ້າຮຽນໃນຫຼັກສູດການຮຽນ-ການສອນໃນລະດັບປະລິນຍາໂທ ຂອງມະຫາວິທະຍາໄລສຸພານຸວົງ ຂອງນັກສຶກສາຖ້າທຽບກັບສົກສຶກສາ 2021-2022 ແມ່ນເຫັນວ່າມີຈຳນວນຫຼຸດລົງ, ບາງຫລັກສູດບໍ່ສາມາດເປີດການຮຽນ-ການສອນໄດ້ ເນື່ອງຈາກມີຜູ້ສະໝັກເຂົ້າຮຽນໜ້ອຍ ແລະ ບາງສາຂາບໍ່ມີຜູ້ສະໝັກເຂົ້າຮຽນ, ເຊິ່ງສວນທາງກັບຈຳນວນຫຼັກສູດປະລິນຍາໂທຂອງມະຫາວິທະຍາໄລທີ່ເປີດເພີ່ມຂຶ້ນ (ມະຫາວິທະຍາໄລ ສຸພານຸວົງ, 2023).

ຈາກຄວາມສຳຄັນ ແລະ ບັນຫາທີ່ກ່າວມາຂ້າງເທິງຜູ້ສຶກສາຈຶ່ງມີຄວາມສົນໃຈຢາກສຶກສາ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫລັກສູດປະລິນຍາໂທຂອງມະຫາວິທະຍາໄລສຸພານຸວົງ ເພື່ອນາເອົາຜົນຂອງການສຶກສາໄປປັບປຸງ ແລະ ເປັນແນວທາງໃນການດຶງດູດນັກສຶກສາເຂົ້າມາຮຽນຕໍ່ຫລັກສູດປະລິນຍາໂທຂອງມະຫາວິທະຍາໄລສຸພານຸວົງໃຫ້ຫຼາຍຂຶ້ນກວ່າເກົ່າ.

ສະນັ້ນ, ຈຸດປະສົງການຄົ້ນຄວ້າຄັ້ງນີ້ແມ່ນ 1) ເພື່ອສຶກສາລະດັບຄວາມຄິດເຫັນຂອງນັກສຶກສາຕໍ່ຄວາມສຳຄັນຂອງປັດໄຈຊຸກຍູ້ນັກສຶກສາໃຫ້ມາສຶກສາຕໍ່ຫລັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ແລະ 2) ເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫຼັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ.

## 2. ອຸປະກອນ ແລະ ວິທີການ

ການສຶກສາຄັ້ງນີ້ຜູ້ສຶກສາແມ່ນໄດ້ໃຊ້ວິທີການສຶກສາເປັນແບບປະລິມານ ແລະ ຄຸນນະພາບໂດຍໃຊ້ແບບສອບຖາມ ແລະ ແບບສຳພາດແບບເຈາະລຶກ ແລະ ນາຂໍ້ມູນດັ່ງກ່າວ ມາວິເຄາະ ໂດຍໃຊ້ໂປຣແກຣມ SPSS ແລ້ວນຳມາອະທິບາຍຜົນ.

### 2.1 ກຸ່ມຕົວຢ່າງ

ກຸ່ມຕົວຢ່າງຂອງການສຶກສາຄັ້ງນີ້ ແມ່ນກຳນົດເອົານັກສຶກສາລະດັບປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ທີ່ກຳລັງສຶກສາຕໍ່ ແລະ ສຳເລັດການສຶກສາໄປແລ້ວລວມທັງໝົດຈຳນວນ 222 ຄົນ (ຫ້ອງການຄົ້ນຄວ້າ

ວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລ ສຸພານຸວົງ, 2023).

**2.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ**

ເຄື່ອງມືທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ ຜູ້ສຶກສາໄດ້ໃຊ້ແບບສອບຖາມເປັນເຄື່ອງມືສຳລັບເກັບລວບລວມຂໍ້ມູນ ໂດຍຈະເປັນແບບສອບຖາມແບບມາດຕາສ່ວນປະເມີນຄ່າ (Rating Scale) ຕາມວິທີຂອງ Likert Scale (Likert , 1932)ເຊິ່ງປະກອບມີ 2 ພາກສ່ວນຄື: ຄວາມຄິດເຫັນຂອງນັກສຶກສາຕໍ່ຄວາມສຳຄັນຂອງປັດໄຈຊຸກຍູ້ນັກສຶກສາໃຫ້ມາຮຽນຕໍ່ຫລັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ແລະ ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາປະລິນຍາໂທ ທີ່ ມະຫາວິທະຍາໄລ ສຸພານຸວົງ ໂດຍອີງຕາມ ມາດຕະຖານຫຼັກສູດແຫ່ງຊາດ ລະດັບປະລິນຍາໂທ (ສະບັບປັບປຸງ) (ສູນປະກັນຄຸນະພາບການສຶກສາ ແລະ ກົມການສຶກສາຊັ້ນສູງ, 2013). ມີການຊອກຫາຄ່າ IOC ຂອງເຄື່ອງມື ໂດຍຄຳຖາມທີ່ມີຄ່າ IOC ຕັ້ງແຕ່ 0.50 ຂຶ້ນໄປ ຖືວ່າເໝາະສົມ ສາມາດນຳໄປໃຊ້ໄດ້ ເຊິ່ງມີຜົນການທົດສອບ IOC=0.89 ແລະ ການຫາຄວາມເຊື່ອໝັ້ນຂອງແບບສອບຖາມຂອງ Cronbach’s Alpha (Cronbach, 1951) ທີ່ມີຄ່າເທົ່າກັບ 0.8 ຂຶ້ນໄປຖືວ່າສາມາດນຳໃຊ້ໄດ້ ເຊິ່ງຜົນການທົດສອບ ມີຄ່າເທົ່າກັບ 0.97 ເຫັນວ່າມີຄວາມເໝາະສົມ ສາມາດນຳໃຊ້ໄດ້.

**2.3 ວິທີການເກັບກຳຂໍ້ມູນ**

ເກັບຂໍ້ມູນຈາກກຸ່ມຕົວຢ່າງໃຫ້ຄົບຖ້ວນ ແລະ ທັນຕາມທີ່ກຳນົດເວລາໄວ້ ເມື່ອໄດ້ຮັບຂໍ້ມູນຄົບແລ້ວຈະໄດ້ມີການກວດຄືນຄວາມຖືກຕ້ອງຂອງແບບສອບຖາມທັງໝົດ, ຈາກນັ້ນ ດຳເນີນການລວບລວມຂໍ້ມູນຈາກແບບສອບຖາມທີ່ໄດ້ຮັບນຳມາວິເຄາະຂໍ້ມູນ ແລະ ອະທິບາຍຜົນ.

**2.4.1 ການວິເຄາະຂໍ້ມູນ**

1) ຄວາມຄິດເຫັນຂອງນັກສຶກສາຕໍ່ຄວາມສຳຄັນຂອງປັດໄຈຊຸກຍູ້ນັກສຶກສາໃຫ້ມາສຶກສາຕໍ່ຫລັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ຈະວິເຄາະຫາຄ່າຈະວິເຄາະຫາຄ່າສະເລ່ຍ (Mean) ແລະ ຜົນປ່ຽນມາດຖານ (Standard Deviation) ໂດຍນຳໃຊ້ Program SPSS Version 26.

2) ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫຼັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ແມ່ນວິເຄາະການຖົດຖອຍແບບພະຫຸຄູນ ໂດຍການຫາຄ່າຄວາມສຳພັນຂອງ Peason correlation ແລະ Regression multiple analysis (Stepwise Multiple Regression Analysis) (Silivanh et al., 2018) ໂດຍນຳໃຊ້ Program SPSS Version 26.

**3. ຜົນໄດ້ຮັບ**

**3.1 ຄວາມຄິດເຫັນຂອງນັກສຶກສາຕໍ່ຄວາມສຳຄັນຂອງປັດໄຈຊຸກຍູ້ນັກສຶກສາໃຫ້ມາສຶກສາຕໍ່ຫລັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ**

ນັກສຶກສາປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ໃຫ້ຄວາມສຳຄັນຕໍ່ ດ້ານຫຼັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ໂດຍລວມຢູ່ໃນລະດັບຫຼາຍ ເຊິ່ງມີ $\bar{X}$ =4.15 ແລະ S.D= 0.46 ເຊິ່ງມີລາຍລະອຽດ ຄື: ນັກສຶກສາໃຫ້ຄວາມສຳຄັນຫຼາຍທີ່ສຸດແມ່ນ ດ້ານຄ່າທຳນຽມໃນການລົງທະບຽນຮຽນ ມີ $\bar{X}$ = 4.24 ແລະ S.D=0.77, ຮອງລົງມາແມ່ນ ດ້ານວັນ ເວລາ ແລະ ຊ່ວງເວລາຮຽນເຊັ່ນ: ຕອນເຊົ້າ, ຕອນບ່າຍ ມີ $\bar{X}$ = 4.19 ແລະ S.D=0.63, ຮອງລົງມາແມ່ນຄຸນນະວຸດ ແລະຊື່ສຽງຂອງຄູ-ອາຈານທີ່ສິດສອນ ມີ $\bar{X}$ =4.13 ແລະ S.D=0.62, ຊື່ສຽງຂອງຄະນະວິຊາ ແລະ ສິ່ງອຳນວຍຄວາມສະດວກໃນການຮຽນ-ການສອນ ມີ $\bar{X}$ = 4.10 ແລະ S.D=0.64, ສຸດທ້າຍແມ່ນໄລຍະເວລາໃນການສຶກສາ (ຈຳນວນເທີມ, ນານວນປີ) ມີ $\bar{X}$ =4.07 ແລະ S.D=0.68.

ລະດັບຄວາມຄິດເຫັນຕໍ່ຄວາມສຳຄັນປັດໄຈດ້ານກະຕຸ້ນໃນການຕັດສິນໃຈເລືອກສຶກສາຕໍ່ຫຼັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ໂດຍລວມແລ້ວໃຫ້ຄວາມສຳຄັນໃນລະດັບຫຼາຍ ມີ $\bar{X}$ = 4.14 ແລະ S.D=0.46 ເຊິ່ງມີລາຍລະອຽດຄື: ນັກສຶກສາໃຫ້ຄວາມສຳຄັນ ຂອງປັດໄຈທີ່ສົ່ງຜົນຕໍ່ໃນການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫລັກສູດປະລິນຍາໂທຂອງມະຫາວິທະຍາໄລສຸພານຸວົງ ດ້ານປັດໄຈກະຕຸ້ນ ຫຼາຍ

ທີ່ສຸດ ແມ່ນປັດໄຈດ້ານຄວາມກ້າວໜ້າ ມີ $\bar{X}$ = 4.26 ແລະ S.D=0.61, ຮອງລົງມາແມ່ນ ປັດໄຈດ້ານຄວາມຮັບຜິດຊອບໜ້າທີ່ວຽກງານ ມີ $\bar{X}$ = 4.20 ແລະ S.D=0.58, ຮອງລົງມາແມ່ນ ປັດໄຈນະໂຍບາຍ ແລະ ການບໍລິຫານງານອົງກອນ ມີ $\bar{X}$ = 4.15 ແລະ S.D=0.60, ປັດໄຈດ້ານການບັງຄັບບັນຊາ ມີ $\bar{X}$ = 4.04 ແລະ S.D=0.63 ແລະ ສຸດທ້າຍ ປັດໄຈດ້ານການຍອມຮັບນັບຖື ມີ $\bar{X}$ = 4.03 ແລະ S.D=0.65.

ນັກສຶກສາປະລິນຍາໂທ ຂອງມະຫາວິທະຍາໄລສຸພານຸວົງ ໃຫ້ຄວາມສາຄັນຕໍ່ປັດໄຈດ້ານການເລືອກສຶກສາຕໍ່ຫຼັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ໂດຍລວມແລ້ວໃຫ້ຄວາມສຳຄັນໃນລະດັບຫຼາຍ ມີ $\bar{X}$ =4.07 ແລະ S.D=0.54 ເຊິ່ງມີລາຍລະອຽດຄື: ນັກສຶກສາໃຫ້ຄວາມສຳຄັນ ໃນດ້ານປັດໄຈບຳລຸງຮັກສາ ດ້ານຄວາມໝັ້ນຄົງໃນຫນ້າທີ່ວຽກງານ ຢູ່ໃນລະດັບຫຼາຍ ມີ $\bar{X}$ = 4.15 ແລະ S.D=0.72, ຮອງລົງມາແມ່ນ ດ້ານຕຳແໜ່ງງານ, ມີ $\bar{X}$ = 4.12 ແລະ S.D=0.76, ຮອງລົງມາແມ່ນ ປັດໄຈດ້ານສະພາບການເຮັດວຽກ ມີ $\bar{X}$ = 4.10 ແລະ S.D=0.64, ຮອງລົງມາແມ່ນ ດ້ານຄ່າແຮງງານ ແລະ ຜົນຕອບແທນ ມີ $\bar{X}$ = 4.01 ແລະ S.D=0.67, ແລະ ສຸດທ້າຍປັດໄຈດ້ານຄວາມສຳພັນພາຍໃນໜ່ວຍງານ ມີ $\bar{X}$ = 3.99 ແລະ S.D=0.66.

ສະຫຼຸບແລ້ວ ລະດັບຄວາມຄິດເຫັນຂອງນັກສຶກສາປະລິນຍາໂທ ມະຫາວິທະຍາໄລ ສຸພານຸວົງ ໃຫ້ຄວາມສຳຄັນຕໍ່ປັດໄຈຊຸກຍູ້ນັກສຶກສາໃຫ້ມາສຶກສາຕໍ່ຫຼັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ໂດຍລວມແລ້ວໃຫ້ຄວາມສຳຄັນໃນລະດັບຫຼາຍ ເຊິ່ງມີ $\bar{X}$ = 4.15 ແລະ S.D0.46 ເຊິ່ງໃນນັ້ນ ປະກອບມີ ປັດໄຈດ້ານໂຄສະນາຫຼັກສູດ ຢູ່ໃນລະດັບຫຼາຍ ມີ $\bar{X}$ = 4.15 ແລະ S.D=046, ຕໍ່ມາແມ່ນປັດໄຈດ້ານກະຕຸ້ນ ມີ $\bar{X}$ = 4.14 ແລະ S.D=0.46 ແລະ ສຸດທ້າຍແມ່ນ ປັດໄຈດ້ານການບຳລຸງຮັກສາ ມີ $\bar{X}$ = 4.07 ແລະ S.D=0.54.

### 3.2 ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫລັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ

ຈາກຜົນການທົດສອບຄ່າ Sig ມີຄ່ານ້ອຍກວ່າລະດັບຄວາມສຳຄັນ 0.05 ໝາຍຄວາມວ່າ ປັດໄຈດ້ານສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້, ປັດໄຈດ້ານການພັດທະນາບຸກຄະລາກອນ, ຜູ້ສອນ (ອາຈານສອນ) ແລະ ປັດໄຈດ້ານການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫລັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ, ເມື່ອພິຈະລະນາຕົວປ່ຽນອິດສະຫຼະ ທີ່ມີອຳນາດໃນການພະຍາກອນ ແລະ ສາມາດອະທິບາຍຄວາມປ່ຽນແປງ ຂອງປັດໄຈ ໄດ້ເຖິງ 51.70%. ສະນັ້ນ, ຈະໄດ້ສົມຜົນການຖົດຖອຍພະຫຸຄູນ ດັ່ງນີ້:

ໃນຮູບແບບຄະແນນດິບ: $Y = 1.128 + 0.274X_7 + 0.343X_3 + 0.121X_{10}$

ໃນຮູບແບບຄະແນນມາດຖານ: $Y' = 0.328X_7 + 0.342X_3 + 0.159X_{10}$

ສະນັ້ນ, ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫລັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ປະກອບມີ 3 ປັດໄຈ ໄດ້ແກ່ ປັດໄຈດ້ານສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້, ປັດໄຈດ້ານການພັດທະນາບຸກຄະລາກອນ, ຜູ້ສອນ (ອາຈານສອນ) ແລະ ປັດໄຈດ້ານການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ ດ້ວຍລະດັບຄວາມສຳຄັນ 0.05.

## 4. ວິພາກຜົນ

ຈາກການວິເຄາະລະດັບຄວາມຄິດເຫັນຂອງນັກສຶກສາໃຫ້ຄວາມສຳຄັນຕໍ່ປັດໄຈຊຸກຍູ້ນັກສຶກສາໃຫ້ມາສຶກສາຕໍ່ຫຼັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ໂດຍລວມແລ້ວແມ່ນໃຫ້ຄວາມສຳຄັນ ຢູ່ໃນລະດັບຫຼາຍ ເຊັ່ນ: ຕໍ່ດ້ານຫຼັກສູດປະລິນຍາໂທ ນັກສຶກສາໃຫ້ຄວາມສຳຄັນຫຼາຍທີ່ສຸດ ໂດຍສະເພາະດ້ານຄ່າທານຽມໃນການລົງທະບຽນຮຽນ, ຮອງລົງມາແມ່ນ ດ້ານວັນ ເວລາ ແລະ ຊ່ວງເວລາຮຽນເຊັ່ນ: ຕອນເຊົ້າ ຕອນບ່າຍ, ຕໍ່ມາແມ່ນຄຸນນະວຸດ ແລະ ຊື່ສຽງຂອງຄູ-ອາຈານທີ່ສິດສອນ, ຊື່ສຽງຂອງຄະນະວິຊາ ແລະ ສິ່ງອຳນວຍຄວາມສະດວກໃນການຮຽນ-

ການສອນ, ແລະ ສຸດທ້າຍແມ່ນໄລຍະເວລາໃນການສຶກສາ (ຈານອນເທີມ, ນານອນປີ). ລະດັບຄວາມຄິດເຫັນຕໍ່ຄວາມສຳຄັນປັດໄຈດ້ານກະຕຸ້ນໃນການຕັດສິນໃຈເລືອກສຶກສາຕໍ່ຫຼັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ໂດຍລວມແລ້ວໃຫ້ຄວາມສຳຄັນໃນລະດັບຫຼາຍ ເຊັ່ນ: ນັກສຶກສາໃຫ້ຄວາມສຳຄັນຫຼາຍທີ່ສຸດ ແມ່ນປັດໄຈດ້ານຄວາມກ້າວໜ້າ, ຮອງລົງມາແມ່ນ ປັດໄຈດ້ານຄວາມຮັບຜິດຊອບໜ້າທີ່ວຽກງານ, ຕໍ່ມາແມ່ນ ປັດໄຈນະໂຍບາຍ ແລະ ການບໍລິຫານງານອົງກອນ, ປັດໄຈດ້ານການບັງຄັບບັນຊາ ແລະ ສຸດທ້າຍ ປັດໄຈດ້ານການຍອມຮັບນັບຖື. ນອກຈາກນັ້ນ, ຍັງໃຫ້ຄວາມສຳຄັນຕໍ່ປັດໄຈດ້ານການເລືອກສຶກສາຕໍ່ຫຼັກສູດປະລິນຍາໂທ ແມ່ນໃຫ້ຄວາມສາຄັນໃນລະດັບຫຼາຍ ເຊັ່ນ: ນັກສຶກສາໃຫ້ຄວາມສຳຄັນ ໃນດ້ານປັດໄຈບຳລຸງຮັກສາ ດ້ານຄວາມໝັ້ນຄົງໃນໜ້າທີ່ວຽກງານ, ປັດໄຈດ້ານສະພາບການເຮັດວຽກ, ດ້ານຄ່າແຮງງານ ແລະ ຜົນຕອບແທນ ແລະ ປັດໄຈດ້ານຄວາມສາພັນພາຍໃນໜ່ວຍງານ ຕາມລຳດັບ; ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Sengchan (2006) ໄດ້ສຶກສາປັດໄຈທີ່ສົ່ງຜົນກະທົບຕໍ່ການຕັດສິນໃຈເລືອກຮຽນຫຼັກສູດປະລິນຍາໂທສາຂາບໍລິຫານລັດວິທະຍາໄລບໍລິຫານລັດມະຫາວິທະຍາໄລບູລະພາ ເຊິ່ງພົບວ່າທຸກດ້ານແມ່ນຢູ່ໃນຢູ່ໃນລະດັບສູງ, ພ້ອມຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ Vongpod (2016) ທີ່ໄດ້ສຶກສາປັດໄຈທີ່ມີຄວາມສຳຄັນຕໍ່ການຕັດສິນໃຈເລືອກຮຽນຂອງນັກສຶກສາໃນການເລືອກຮຽນລະດັບບັນດິດສຶກສາ ແລະ ແນວທາງໃນການເພີ່ມຈຳນວນນັກສຶກສາຂອງມະຫາວິທຍາໄລສິງຂານະຄະລິນ ວິທະຍາເຂດຫາດໃຫຍ່ ທີ່ໃຫ້ຄວາມສຳຄັນຢູ່ໃນລະດັບຫຼາຍໃນທຸກປັດໄຈ ເຊິ່ງປະກອບມີປັດໄຈເພີ່ມຄື: ປັດໄຈດ້ານນັກສຶກສາ ແລະ ປັດໄຈດ້ານງົບປະມານທີ່ພົບວ່າ ມີຄວາມຄິດເຫັນໃນລະດັບຫຼາຍເຊັ່ນກັນ ແລະ ສອດຄ່ອງກັບ ຜົນການຄົ້ນຄວ້າຂອງ Lee (2021) ທີ່ໄດ້ສຶກສາກ່ຽວກັບ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກ ເຂົ້າມາສຶກສາຢູ່ວິທະຍາໄລເຕັກນິກ-ວິຊາຊີບຫຼວງພະບາງ ໃນດ້ານ ປັດໄຈດ້ານຫຼັກສູດ, ປັດໄຈດ້ານສະພາບແວດລ້ອມ, ປັດໄຈດ້ານການບໍລິຫານຈັດການ ຂອງວິທະຍາໄລ, ປັດໄຈດ້ານອາຈານຜູ້ສອນ, ປັດໄຈດ້ານອຸປະກອນການຮຽນການສອນ ເຊິ່ງລ້ວນແຕ່ຢູ່ໃນລະດັບຫຼາຍ ແລະ ແຕກຕ່າງກັບການຄົ້ນຄວ້າຂອງ ກັບງານວິໄຈຂອງ Chartthai (2012) ທີ່ສຶກສາແຮງຈູງໃຈ ແລະ ຄວາມຕ້ອງການໃນການສຶກສາຕໍ່ລະດັບບັນດິດສຶກສາມະຫາວິທະຍາໄລທຸລະກິດບັນດິດ ເຊິ່ງພົບວ່າ ແຮງຈູງໃຈດ້ານຄວາມກ້າວໜ້າແມ່ນຢູ່ໃນລະດັບຫຼາຍ.

ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫລັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ປະກອບມີ ປັດໄຈດ້ານສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້, ປັດໄຈດ້ານການພັດທະນາບຸກຄະລາກອນ, ຜູ້ສອນ (ອາຈານສອນ) ແລະ ປັດໄຈດ້ານການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ ດ້ວຍລະດັບຄວາມສຳຄັນ 0.05. ສອດຄ່ອງກັບການຄົ້ນຄວ້າຂອງ Lee (2021) ທີ່ໄດ້ສຶກສາກ່ຽວກັບ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກ ເຂົ້າມາສຶກສາຢູ່ວິທະຍາໄລເຕັກນິກ-ວິຊາຊີບຫຼວງພະບາງ ຜົນການຄົ້ນຄວ້າພົບວ່າ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາທີ່ເລືອກເຂົ້າມາສຶກສາຢູ່ ວິທະຍາໄລ-ເຕັກນິກວິຊາຊີບ ຫຼວງພະບາງ ປະກອບມີ ປັດໄຈດ້ານຫຼັກສູດ, ປັດໄຈດ້ານສະພາບແວດລ້ອມ, ປັດໄຈດ້ານການບໍລິຫານຈັດການ ຂອງວິທະຍາໄລ, ປັດໄຈດ້ານອາຈານຜູ້ສອນ, ປັດໄຈດ້ານ ເຫດຜົນສ່ວນຕົວ ແລະ ປັດໄຈດ້ານອຸປະກອນການຮຽນການສອນ. Vongpod (2016) ທີ່ສຶກສາປັດໄຈທີ່ມີຄວາມສຳຄັນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກຮຽນລະດັບບັນດິດສຶກສາ ທີ່ສຶກສາຢູ່ມະຫາວິທະຍາໄລສິງຂານະຄະລິນ ວິທະຍາເຂດຫາດໃຫຍ່ ຜົນການຄົ້ນຄວ້າພົບວ່າ ປັດໄຈສຳຄັນ ໃນການຕັດສິນໃຈທີ່ຈະສຶກສາໃນລະດັບປະລິນຍາຕີລວມທັງຄູສອນ, ງົບປະມານ, ອາຄານ ແລະ ສະພາບແວດລ້ອມຂອງສະຖາບັນ, ຫຼັກສູດ, ຊ່ອງທາງການເຂົ້າເຖິງຂອງສະຖາບັນ ແລະ ການສົ່ງເສີມການຕະຫຼາດ. ແຕກຕ່າງກັບການຄົ້ນຄວ້າຂອງ

Lerdpaphaphone (2010) ໄດ້ສຶກສາ ປັດໄຈທີ່ສົ່ງຜົນກະທົບຕໍ່ການຕັດສິນໃຈຮຽນໃນປະລິນຍາໂທສາຂາບັນຊີ, ຜົນການຄົ້ນຄວ້າພົບວ່າ ປັດໄຈທີ່ສົ່ງຜົນກະທົບຕໍ່ການຕັດສິນໃຈຮຽນຕໍ່ລະດັບປະລິນຍາໂທຫຼາຍທີ່ສຸດ ແມ່ນປັດໄຈດ້ານສະຖາບັນການສຶກສາ, ຕໍ່ມາແມ່ນປັດໄຈດ້ານສັງຄົມ ແລະ ປັດໄຈດ້ານຄອບຄົວຕາມລຳດັບ ກ່ອນທີ່ຈະຕັດສິນໃຈເຂົ້າຮຽນໃນຫຼັກສູດປະລິນຍາໂທສາຂາບັນຊີ ແລະ ຍັງແຕກຕ່າງກັບການຄົ້ນຄວ້າຂອງ

**5. ສະຫຼຸບ**

1) ລະດັບຄວາມຄິດເຫັນຂອງນັກສຶກສາໃຫ້ຄວາມສຳຄັນຕໍ່ປັດໄຈຊຸກຍູ້ນັກສຶກສາໃຫ້ມາສຶກສາຕໍ່ຫຼັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ໂດຍລວມແລ້ວແມ່ນໃຫ້ຄວາມສຳຄັນ ຢູ່ໃນລະດັບຫຼາຍ ເຊັ່ນ: ດ້ານຫຼັກສູດປະລິນຍາໂທ, ດ້ານກະຕຸ້ນໃນການຕັດສິນໃຈເລືອກສຶກສາຕໍ່ຫຼັກສູດປະລິນຍາໂທ ແລະ ດ້ານການເລືອກສຶກສາຕໍ່ຫຼັກສູດປະລິນຍາໂທ ແມ່ນໃຫ້ຄວາມສຳຄັນ ຕາມລຳດັບ.

2) ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫລັກສູດປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ປະກອບມີ ປັດໄຈດ້ານສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້, ປັດໄຈດ້ານການພັດທະນາບຸກຄະລາກອນ, ຜູ້ສອນ (ອາຈານສອນ) ແລະ ປັດໄຈດ້ານການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ.

**6. ຂໍ້ຂັດແຍ່ງ**

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

**7. ເອກະສານອ້າງອີງ**

ກະຊວງສຶກສາທິການ ແລະ ກິລາ. (2016). *ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາຂະແໜງການສຶກສາ ແລະ ກິລາວ 5 ປີ ຄັ້ງທີ 8 (2016-2020).*

ກົມການສຶກສາຊັ້ນສູງ. (2020). *ຂໍ້ຕົກລົງວ່າດ້ວຍມາດຕະຖານຫຼັກສູດແຫ່ງຊາດ ລະດັບປະລິນຍາໂທ (ສະບັບປັບປຸງ), ສະບັບເລກທີ 4487/ສສກ, ລົງວັນທີ 02 ຕຸລາ 2020.*

ສູນປະກັນຄຸນະພາບການສຶກສາ ແລະ ກົມການສຶກສາຊັ້ນສູງ. (2013). *ຂໍ້ຕົກລົງຂອງລັດຖະມົນຕີ ວ່າດວຍການນຳໃຊ້ມາດຕະຖານຄຸນນະພາບການສຶກສາຊັ້ນສູງ, ສະບັບເລກທີ 2608/ສກ.ສປຄ ນະຄອນຫຼວງ ວັນຈັນ, 16 ກໍລະກົດ 2013.*

ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ ມະຫາວິທະຍາໄລສຸພານຸວົງ. (2023). *ສະຖິຕິນັກສຶກສາ ປະລິນຍາໂທ ຂອງມະຫາວິທະຍາໄລ ສຸພານຸວົງ ສົກປີ 2023.*

ນາຍົກລັດຖະມົນຕີ. (2003). *ດຳລັດວ່າດ້ວຍການສ້າງຕັ້ງມະຫາວິທະຍາໄລ ສຸພານຸວົງ, ສະບັບເລກທີ 169/ນຍ, ລົງວັນທີ 4 ພະຈິກ 2003.*

ມະຫາວິທະຍາໄລ ສຸພານຸວົງ. (2023). *ບົດສະຫຼຸບປະຈຳປີຂອງມະຫາວິທະຍາໄລ ສຸພານຸວົງ ປະຈຳສົກສຶກສາ 2023 ໃນສົກສຶກສາ 2022-2023*

Anonjarn, S. (2021). *Factors that affect the decision to choose to study for a master's degree in the University of the Mahamongkutlad University, Sri Lanka Campus*, Thailand.

Lerdpaphaphone, C. (2010). *Factors affecting the decision to choose to continue studying at the master's degree in accounting at Bangkok Thep University of Natural Sciences* [Master's thesis], University of Natural Sciences.

Cronbach, L. J. (1951). Coefficient alpha and the internal structure of tests. *Psychometrika, 16*, 297-334. https://doi.org/10.1007/BF02310555

Chartthai, T. (2012). *Motivation and requirements for studying at Bandit Business University* [Master's thesis], Bandit University of Business.

Keosomboon, C. (2002). *Important factors influencing education at the master's program*.

Lee, S. (2021). *Factors affecting the decision of students who choose to study at Luang Prabang Technical-Vocational College*.

Likert, R. (1932). A technique for the measurement of attitudes. *Archives of Psychology*. 22, 140, 55.

Sengchan, K. (2006). *Factors that affect the decision to choose to study the Master's course in Public Administration at Bura Pha University*.

SILIVANH, S., VATHANAVONG, T., PHEWKHAMPHOM, S., INTHAVICHIT, P., DUANGCHAN, B., & CHITTHAVONE, C. (2019). Factors affecting on basic knowledge in mathematics and Lao Language for First-Year Primary School Teacher Trainees at Luangprabang Teacher Training College, Year 2017-2018. *Souphanouvong University Journal Multidisciplinary Research and Development*, 5(2), 127-137.

VATHANAVONG, T., PHANHNALATH, V., Somepheth, S. A. N., VATHANAVONG, P., & KHOTSAIGNO, S. (2020). An Investigation of Education for Sustainable Development (ESD) Implementation in Lao Teacher Education Institutions (Lao TEIs) through Academic Workshop. *Souphanouvong University Journal Multidisciplinary Research and Development*, *6*(1), 95-108.

Vongpod, P. (2016). *Factors that are important to the students' decision to choose a course of study in the selection of a master's degree and the way to increase the number of students at the Songkhla University*, Hat Yai Campus, Thailand.


**ຕາຕະລາງ 1:** ສະແດງເຖິງຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ປັດໄຈທີ່ສົ່ງຜົນຕໍ່ການຕັດສິນໃຈຂອງນັກສຶກສາໃນການເລືອກສຶກສາຕໍ່ຫລັກສູດປະລິນຍາໂທຂອງມະຫາວິທະຍາໄລສຸພານຸວົງ. ໂດຍອີງຕາມມາດຕະຖານຄຸນະພາບການສຶກສາຊັ້ນສູງຂອງກະຊວງສຶກສາທິການ ແລະ ກິລາ.

| ລ/ດ | ມາດຕະຖານຄຸນນະພາບການສຶກສາຊັ້ນສູງ | ຈຳນວນ (N) | ຄ່າ ສະເລ່ຍ | ຄ່າຜັນປ່ຽນ ມາດຕະຖານ | ລະດັບຄວາມ ສຳຄັນ |
|---|---|---|---|---|---|
| 1 | ການໃຫ້ບໍລິການການຮຽນ-ການສອນຫຼັກສູດປະລິນຍາໂທຂອງມະຫາວິທະຍາໄລສຸພານຸວົງ | 220 | 4.08 | 0.46 | ຫຼາຍ |
| 2 | ລະບົບການຄຸ້ມຄອງ ແລະ ບໍລິຫານ | 220 | 4.17 | 0.43 | ຫຼາຍ |
| 3 | ການພັດທະນາບຸກຄະລາກອນ, ຜູ້ສອນ (ອາຈານສອນ) | 220 | 4.14 | 0.43 | ຫຼາຍ |
| 4 | ຫຼັກສູດປະລິນຍາໂທຂອງ ມະຫາວິທະຍາໄລສຸພານຸວົງ | 220 | 4.07 | 0.46 | ຫຼາຍ |
| 5 | ປະສິດທິຜົນຂອງການຮຽນ-ການສອນ | 220 | 4.05 | 0.64 | ຫຼາຍ |
| 6 | ການສົ່ງເສີມນັກສຶກສາ | 220 | 4.02 | 0.56 | ຫຼາຍ |
| 7 | ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້ | 220 | 3,98 | 0.51 | ຫຼາຍ |
| 8 | ລະບົບຂໍ້ມູນຂ່າວສານ | 220 | 3.98 | 0.59 | ຫຼາຍ |

| | | | | | |
|---|---|---|---|---|---|
| 9 | ລະບົບການປະກັນຄຸນນະພາບພາຍໃນ | 220 | 3.96 | 0.57 | ຫຼາຍ |
| 10 | ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ | 220 | 3.98 | 0.57 | ຫຼາຍ |
| | **ຄ່າສະເລ່ຍລວມ** | **220** | **3.62** | **0.57** | **ຫຼາຍ** |

**ຕາຕະລາງ 2** ສະແດງເຖິງ ຄ່າສໍາປະສິດສະຫະສໍາພັນຂອງຕົວປ່ຽນ ແລະ ກຸ່ມຕົວປ່ຽນອິດສະຫຼະດ້ວຍກັນ ດ້ວຍວິທີ Pearson Correlations.

| **Pearson Correlations** | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | X1 | X2 | X3 | X4 | X5 | X6 | X7 | X8 | X9 | X10 | X11 | X12 | X13 |
| X1 | 1 | .628** | .516** | .553** | .451** | .422** | .477** | .451** | .488** | .421** | .460** | .333** | .448** |
| X2 | | 1 | .626** | .610** | .546** | .490** | .513** | .545** | .574** | .511** | .439** | .343** | .472** |
| X3 | | | 1 | .756** | .570** | .460** | .512** | .560** | .559** | .530** | .531** | .550** | .495** |
| X4 | | | | 1 | .668** | .579** | .566** | .632** | .654** | .617** | .503** | .466** | .509** |
| X5 | | | | | 1 | .760** | .747** | .751** | .774** | .740** | .501** | .413** | .578** |
| X6 | | | | | | 1 | .782** | .720** | .770** | .718** | .435** | .315** | .554** |
| X7 | | | | | | | 1 | .721** | .754** | .752** | .561** | .440** | .632** |
| X8 | | | | | | | | 1 | .796** | .745** | .508** | .380** | .603** |
| X9 | | | | | | | | | 1 | .799** | .456** | .387** | .596** |
| X10 | | | | | | | | | | 1 | .512** | .410** | .615** |
| X11 | | | | | | | | | | | 1 | .732** | .660** |
| X12 | | | | | | | | | | | | 1 | .611** |
| X13 | | | | | | | | | | | | | 1 |
| **Correlation is significant at the 0.01 level (2-tailed) | | | | | | | | | | | | | |